ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ອົງຄະນະພັກ ທຫລ
# ປາຖະກະຖາວັນສ້າງຕັ້ງກອງທັບຄົບຮອບ 70 ປີ.




ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການປາຖະກະຖາວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 70 ປີ ຊຶ່ງຈັດຂຶ້ນໃນວັນທີ 4 ມັງກອນ 2019 ທີ່ສະໂມສອນສະຖາບັນການທະນາຄານໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສີດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ); ສະຫາຍພົນຈັດຕະວາ ສາຍສະໝອນ ສະຫຼັບແສງ ຫົວໜ້າກົມໂຄສະນາອົບຮົມ ກົມໃຫຍ່ການເມືອງກອງທັບ; ພ້ອມນັ້ນ ກໍ່ມີຄະນະພັກ, ບັນດາຄະນະພັກຮາກຖານ-ຄະນະໜ່ວຍພັກ, ສະມາຊິກພັກທົ່ວອົງຄະນະພັກ ທຫລ ເຂົ້າຮ່ວມ.

ສະຫາຍຫົວໜ້າກົມໂຄສະນາອົບຮົມກົມໃຫຍ່ການເມືອງກອງທັບໄດ້ນຳສະເໜີປະຫວັດແຫ່ງຄວາມເປັນມາຂອງວັນສຳຄັນດັ່ງກ່າວ ຊຶ່ງຊາດລາວເປັນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານນັບຫຼາຍພັນປີ, ປະຊາຊົນລາວບັນດາເຜົ່າມີມູນເຊື້ອສາມັກຄີ, ດຸໝັ່ນ ແລະ ມີມູນເຊື້ອຕໍ່ສູ້ຢ່າງພິລະອາດຫານຕ້ານການຮຸກຮານຈາກສັດຕູພາຍນອກ ເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດອັນແສນຮັກຂອງຕົນ; ອັນພົ້ນເດັ່ນແມ່ນຂະບວນການຕໍ່ສູ້ທ້ອນໂຮມປະເທດຊາດພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມ ມະຫາຣາຊ, ຂະບວນການຕໍ່ສູ້ຂອງເຈົ້າໄຊຍະເຊດຖາທິຣາຊ, ເຈົ້າສຸຣິຍະວົງສາ, ເຈົ້າອະນຸວົງ ແລະ ອື່ນໆ; ອັນພົ້ນເດັ່ນໃນສະຕະວັດທີ XIX - XX ແມ່ນຂະບວນການຕໍ່ສູ້ຂອງປະຊາຊົນບັນດາເຜົ່າໃນພາກຕ່າງໆຂອງປະເທດຕ້ານກັບການຮຸກຮານຂອງພວກລ່າເມືອງຂຶ້ນແບບເກົ່າແຕ່ກໍ່ບໍ່ໄດ້ຮັບໄຊຊະນະ ຍ້ອນບໍ່ມີການນຳພາຂອງພັກກອມມູນິດ, ບໍ່ທັນມີກຳລັງປະກອບອາວຸດປະຕິວັດ ແລະ ແນວໂຮມເປັນເອກະພາບ; ເວົ້າລວມແລ້ວສະພາບການສາກົນ ແລະ ພາຍໃນບໍ່ທັນເອື້ອອຳນວຍ.




ໂດຍປະຕິບັດຕາມຄຳສັ່ງຂອງສູນກາງພັກກອມມູນິດອິນດູຈີນ; ມາຮອດວັນທີ 20 ມັງກອນ 1949 ຢູ່ເຂດທີ່ໝັ້ນລາວຮຸ່ງ-ພຽງສາ ເມືອງຊຽງຄໍ້ ແຂວງຫົວພັນ, ທ່ານ ໄກສອນ ພົມວິຫານ ໄດ້ປະກາດສ້າງຕັ້ງ “ກອງລາດຊະວົງ” ຂຶ້ນຢ່າງເປັນທາງການໂດຍແມ່ນທ່ານ ເພັດສະວົງ ເປັນຫົວໜ້າການທະຫານ, ທ່ານ ສີສະຫວາດ ແກ້ວບຸນພັນ ເປັນຫົວໜ້າການເມືອງ, ທ່ານ ຄຳມູນ ເປັນຮອງຜູ້ບັນຊາ ແລະ ໃນມື້ດຽວກັນນັ້ນໂດຍພາຍໃຕ້ການນຳພາອັນແທດເຖິງຂອງສາຂາພັກກອມມູນິດອິນດູຈີນ ປະຈຳແຄ້ວນລາວກອງປະຊຸມໄດ້ເອົາສະຖານທີ່ກອງລາດຊະວົງເປັນບ່ອນຈັດຕັ້ງພິທີປະກາດສ້າງຕັ້ງກອງທັບລາວອິດສະຫຼະຂຶ້ນຢ່າງເປັນທາງການຢູ່ສະຖານທີ່ດຽວກັນ. ໂດຍແມ່ນທ່ານ ໄກສອນ ພົມວິຫານ ເປັນຜູ້ປະກາດສ້າງຕັ້ງ ແລະ ເປັນຜູ້ບັນຊາໂດຍກົງ; ຖັດຈາກນັ້ນມາກອງໄຊຈັກກະພັດ, ກອງຟ້າງຸ່ມ, ກອງປັດໃຈ ແລະ ກອງໄຊເຊດຖາ ໄດ້ປະກາດຮັບເອົາເຂົ້າໂຮມເປັນກອງທັບລາວອິດສະຫຼະເປັນທາງການພາຍໃຕ້ການຊີ້ນຳໂດຍກົງຂອງສາຂາພັກກອມມູນິດອິນດູຈີນປະຈຳລາວ; ນັບແຕ່ນັ້ນມາວັນທີ 20 ມັງກອນ 1949 ຈຶ່ງກາຍເປັນວັນປະຫວັດສາດແຫ່ງການສ້າງຕັ້ງກອງທັບປະຊາຊົນລາວ.

ຜ່ານຍ່ານທາງແຫ່ງການກຳເນີດ, ສູ້ຮົບມີໄຊ ແລະ ເຕີບໃຫຍ່ຂະຫຍາຍຕົວ ພາຍໃຕ້ການນຳພາອັນປີຊາສາມາດສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ; ກອງທັບປະຊາຊົນລາວໄດ້ຜ່ານຜ່າອຸປະສັກນາໆປະການ, ບໍ່ຈັກວ່າເທົ່າໃດ ແລະ ເຕັມໄປດ້ວຍການເສຍສະຫຼະອັນໃຫຍ່ຫຼວງໃນພາລະກິດປົດປ່ອຍຊາດເຮັດສຳເລັດພາລະກຳປະຫວັດສາດທີ່ພັກ ແລະ ປະຊາຊົນມອບໝາຍໃຫ້ຢ່າງມີໄຊສາມາດຕີເອົາຊະນະພວກລ່າເມືອງຂຶ້ນແບບເກົ່າ, ແບບໃໝ່ ແລະ ລູກແຫຼ່ງຕີນມືຂາຍຊາດສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ, ສະຖາປະນາ ສປປ ລາວໃນວັນທີ 2 ທັນວາ 1975 ຢ່າງສະຫງ່າຜ່າເຜີຍ; ມາເຖິງປັດຈຸບັນ ຍັງເປັນກຳລັງຫຼັກແຫຼ່ງໃນການປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ລະບອບໃໝ່ໄວ້ໄດ້ຢ່າງໝັ້ນຄົງ.

ເພື່ອເຮັດສຳເລັດໜ້າທີ່ອັນໜັກໜ່ວງ ແລະ ມີກຽດສະຫງ່າທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້; ບັນດານາຍ ແລະ ພົນທະຫານໃນກອງທັບປະຊາຊົນລາວພ້ອມກັນອອກແຮງເສີມຂະຫຍາຍທາດແທ້, ມູນເຊື້ອຂອງຊາດ ແລະ ຂອງກອງທັບ, ເດັດດ່ຽວປະຕິບັດແນວທາງການປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ, ເສີມຂະຫຍາຍບົດບາດເປັນກຳລັງຫຼັກແຫຼ່ງແກ່ນສານໃນການຈັດຕັ້ງປະຕິບັດ 2 ໜ້າທີ່ຍຸດທະສາດໃນໄລຍະໃໝ່, ກອງທັບປະຊາຊົນລາວ ກ້າວຂຶ້ນຍາດເອົາໄຊຊະນະໃໝ່ໃຫຍ່ຫຼວງກ່ວາເກົ່າໃຫ້ສົມກັບຄຳສັ່ງສອນຂອງປະທານ ໄກສອນ ພົມວິຫານ ທີ່ວ່າ: **“ເວລາໃດກອງທັບກໍ່ນຳໜ້າທຸກວຽກງານ, ເດັດດ່ຽວໜຽວແໜ້ນຜ່ານຜ່າອຸປະສັກ, ສຳເລັດທຸກໜ້າທີ່, ຕີເອົາຊະນະສັດຕູທຸກໂຕ, ສົມແລ້ວເປັນກຳລັງແກ່ນສານທີ່ເຂັ້ມແຂງຂອງການປະຕິວັດ, ເປັນເຄື່ອງມືອັນແຫຼມຄົມຂອງພັກ”.**




ການປາຖະກະຖາວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 70 ປີໄດ້ດຳເນີນໄປເປັນເວລາເຄິ່ງວັນອັນໄດ້ເຮັດໃຫ້ບັນດາຄະນະພັກ-ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງຂອງຂະແໜງການທະນາຄານສາມາດກຳໄດ້ແໜ້ນທາດແທ້, ມູນເຊື້ອຂອງຊາດ ແລະ ຂອງກອງທັບໂດຍສະເພາະແມ່ນຜົນງານການເຄື່ອນໄຫວຕໍ່ສູ້ຢ່າງພິລະອາດຫານ ແລະ ມີໄຊ, ເຫັນໄດ້ວິຣະກຳ, ຄວາມຈົ່ງຮັກພັກດີຕໍ່ຊາດ, ຕໍ່ພັກ ແລະ ຕໍ່ປະຊາຊົນຂອງກອງທັບປະຊາຊົນລາວວິລະຊົນໃນຕະຫຼອດ 70 ປີຜ່ານມາ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງປົດບາດຄ່າເງິນກີບລາວ